# ໂຄງການພັດທະນາກະສິກຳສະອາດ (CADP) ໃນ ສ.ປ.ປ ລາວ

# ຄູ່ມືວິຊາການ ກະສິກຳອິນຊີ (OA)

## ນ້ຳລະລາຍຜົງຟູ (ໂຊດ້ຽມ ໄບຄາໂບເນດ)

## (ກຳຈັດເຊື້ອ)


















◆ ນ້ຳລະລາຍຜົງຟູ (ໂຊດ້ຽມ ໄບຄາໂບເນດ)

(ກຳຈັດເຊື້ອ)

(Pictures from free picture sites &https://shisetsuengei.com/news-column/work-efficiency/work-efficiency-017/#link01), https://www.naotomi.co.jp/service/used-food-oil.php)






# ◆ ນ້ຳລະລາຍຜົງຟູ

**ນິຍາມ:**

ນ້ຳລະລາຍຜົງຟູ ມີສ່ວນປະສົມ ນ້ຳກັບຜົງຟູ.

ນ້ຳລະລາຍຜົງຟູ ແມ່ນວິທີການກຳຈັດເຊື້ອຣາຢູ່ເທິງຜິວໃບ ທີ່ມີປະສິດທິພາບຫຼາຍ ໂດຍການສີດໃສ່ດ້ານໜ້າ ແລະ ດ້ານຫຼັງຂອງໃບ. ເຊື້ອຣາເຫຼົ່ານີ້ເປັນສາເຫດ ກໍ່ໃຫ້ເກີດພະຍາດ.

ວິທີນີ້ປອດໄພຕໍ່ ສິ່ງແວດລ້ອມ, ມະນຸດ ແລະ ລະບົບນິເວດອື່ນໆ.



ພະຍາດເຊື້ອຣາແປ້ງ
(ໝາກອຶ)



ພະຍາດເຊື້ອຣາທີ່ເປັນສີເທົາ
(ໝາກແຕງ)

(Picture sources: https://www.boujo.net/handbook/saien/saie-10.html https://www.boujo.net/handbook/tomato/toma-416.html






# ◆ <u>ນ້ຳລະລາຍຜົງຟູ</u>

**ພະຍາດທີ່ເກີດຂຶ້ນໃນແຕ່ລະ ລະດູ ແລະ ຊະນິດຂອງພະຍາດທີ່ເກີດ:**

【ລະດູຝົນ】 :

- <u>ສະພາບອາກາດທີ່ມີອຸນຫະພູມ ແລະ ຄວາມຊື້ນ ປານກາງ-ສູງ</u> :
- ພະຍາດເຊື້ອຣາທີ່ເປັນສີເທົາ
- ພະຍາດເຊື້ອຣາແປ້ງ

【ລະດູແລ້ງ】 :

- <u>ສະພາບອາກາດທີ່ມີອຸນຫະພູມ ປານກາງ-ສູງ ແລະ ຄວາມຊື້ນປານກາງ:</u>
- ພະຍາດເຊື້ອຣາແປ້ງ



Erysiphaceae
(ພະຍາດເຊື້ອຣາແປ້ງ)



Botrytis cinerea
(ພະຍາດເຊື້ອຣາສີເທົາ)

(Picture sources: Wikipedia, https://www.pinterest.com/pin/312578030356824506/)






# ◆ ນ້ຳລະລາຍຜົງຟູ

ນ້ຳລະລາຍຜົງຟູ ມີຄວາມສາມາດກຳຈັດເຊື້ອຣາໄດ້ດີ.

ນ້ຳລະລາຍຜົງຟູ ມີລັກສະນະຕິດຢູ່ເທິງຜິວຂອງໃບ ຈະເພີ່ມຄ່າ PH ເປັນ <u>ດ່າງ</u> ໄດ້ຢ່າງວ່ອງໄວ ແລະ ເຊື້ອຣາບໍ່ສາມາດຢູ່ໃນສະພາບແວດລ້ອມທີ່ມີຄວາມເປັນ <u>ດ່າງ</u> ສູງໄດ້.

ເຊື້ອຣາເຫຼົ່ານັ້ນໄດ້ຖືກກຳຈັດ ແລະ ສາມາດປ້ອງກັນເຊື້ອພະຍາດ ທີ່ມັກເກີດຂຶ້ນກັບພືດໄດ້.



Erysiphaceae
(ພະຍາດເຊື້ອຣາແປ້ງ)



Botrytis cinerea
(ພະຍາດເຊື້ອຣາທີ່ເປັນສີເທົາ)

(Picture sources: Wikipedia, https://www.pinterest.com/pin/312578030356824506/)

# ◆ ນ້ຳລະລາຍຜົງຟູ




ວິທີຈັດຕັ້ງປະຕິບັດ:

1. ກະກຽມຜົງຟູ ແລະ ນ້ຳເຜີ້ງ.

ຕົ້ນທຶນ:

| ລ/ດ | ວັດຖຸ | ປະລິມານ | ຫົວໜ່ວຍ | ລາຄາ (ກີບ) |
|---|---|---|---|---|
| 1 | ຜົງຟູ | 300 g | 1 ແພັກ | 10,000 |
| 2 | ນ້ຳເຜີ້ງ | 360 g | 1 ແກ້ວ | 35,000 |
| ລວມມູນຄ່າທັງໝົດ | | | | 45,000 |




※ ປະໂຫຍດທີ່ໄດ້ຈາກການນຳໃຊ້ ນ້ຳເຜີ້ງ ແມ່ນຄວາມໜຽວ ເຮັດໃຫ້ຜົງຟູສາມາດເກາະຕິດໃບພືດໄດ້ດີ.

# ◆ ນ້ຳລະລາຍຜົງຟູ







ຕົ້ນທຶນຕົວຈິງ: ການພົ່ນນ້ຳລະລາຍໃນປະລິມານ 20 ℓ (ໃນອັດຕາສ່ວນ 2,000 ເທື່ອ ຕໍ່ການພົ່ນ 1 ຄັ້ງ)

| ລ/ດ | ວັດຖຸ | ປະລິມານ | ຫົວໜ່ວຍ | ຮູບພາບ | ລາຄາ (ກີບ) |
|---|---|---|---|---|---|
| 1 | ຜົງຟູ | 10 g | 1 ບ່ວງ |  | 333 |
| 2 | ນ້ຳເຜີ້ງ | 10 ml | 1 ຝາ |  | 972 |
| ລວມມູນຄ່າທັງໝົດ | | | | | 1,305 |

ຕົ້ນທຶນຕົວຈິງ: ການພົ່ນນ້ຳລະລາຍໃນປະລິມານ 20 ℓ (ໃນອັດຕາສ່ວນ 1,000 ເທື່ອ ຕໍ່ການພົ່ນ 1 ຄັ້ງ)

| ລ/ດ | ວັດຖຸ | ປະລິມານ | ຫົວໜ່ວຍ | ຮູບພາບ | ລາຄາ (ກີບ) |
|---|---|---|---|---|---|
| 1 | ຜົງຟູ | 20 g | 2 ບ່ວງ |  | 667 |
| 2 | ນ້ຳເຜີ້ງ | 20 ml | 2 ຝາ |  | 1,944 |
| ລວມມູນຄ່າທັງໝົດ | | | | | 2,611 |

# ◆ ນ້ຳລະລາຍຜົງຟູ

ນ້ຳ



ຜົງຟູ
(2,000 ເທື່ອ)




ນ້ຳເຜິ້ງ
(2,000 ເທື່ອ)






ເຄື່ອງສີດນ້ຳຢາ ຖັງ 20 ℓ

ວິທີຈັດຕັ້ງປະຕິບັດ:

2. ຂັ້ນຕອນທຳອິດ,ປະສົມລົງໃສ່ກັບນ້ຳ **ໃນອັດຕາສ່ວນ 2,000 ເທື່ອ.**

**ອັດຕາສ່ວນຂອງ ນ້ຳລະລາຍເຈືອຈາງ 2,000 ເທື່ອ**

| ນ້ຳ | + | ຜົງຟູ | + | ນ້ຳເຜິ້ງ |
|---|---|---|---|---|
| 50ℓ | + | 25 g | + | 25 mℓ |
| 40 ℓ | + | 20 g | + | 20 mℓ |
| 30ℓ | + | 15 g | + | 15 mℓ |
| 20ℓ | + | 10 g | + | 10 mℓ |
| 15ℓ | + | 7.5 g | + | 7.5 mℓ |
| 10ℓ | + | 5 g | + | 5 mℓ |
| 1ℓ | + | 0.5 g | + | 0.5 mℓ |

(ຖ້າຫາກທ່ານນຳໃຊ້ ເຄື່ອງສີດນ້ຳຢາ ຖັງ 20 ℓ , ແມ່ນໃຫ້ເພີ່ມ ຜົງຟູ 10 g ແລະ ນ້ຳເຜິ້ງ 10 mℓ)

# ◆ ນ້ຳລະລາຍ ຜົງຟູ




ເຄື່ອງສີດນ້ຳຢາ ຖັງ 20 ℓ



<u>ວິທີຈັດຕັ້ງປະຕິບັດ</u>:

3. ສີດນ້ຳຢາລົງໃສ່ດ້ານໜ້າ ແລະ ດ້ານຫຼັງຂອງໃບ <u>ຂອງຕົ້ນພືດຕົ້ນດຽວ ເພື່ອເປັນການທົດສອບ. ແລ້ວກວດກາມື້ຕໍ່ມາວ່າ ມີອາການ **_ໃບໄໝ້_** ຫຼື ບໍ່.</u>

4. ຖ້າຫາກວ່າບໍ່ມີອາການ **_ໃບໄໝ້_** ແມ່ນໃຫ້ສີດໃສ່ຕົ້ນພືດທີ່ເຫຼືອ.

# ສິ່ງທີ່ຄວນເອົາໃຈໃສ່

***ອາການໃບໃໝ້*** ຈະເກີດຂຶ້ນເມື່ອມີສ່ວນປະສົມຂອງ ນໍ້າລະລາຍເຈືອຈາງສູງເກີນໄປ ເມື່ອເຮົາສີດນໍ້າຢາບາງຊະນິດໃສ່ໃບພືດ ເຊັ່ນ: ຝຸ່ນອິນຊີ, ຢາຂ້າເຊື້ອຣາ ເປັນຕົ້ນ

- ອາການໃບໃໝ້ ມັກເກີດຕັ້ງແຕ່ຂອບໃບ.
- ອາການໃບໃໝ້ ຈະເກີດຂຶ້ນຢູ່ມື້ຕໍ່ມາ ຫຼື ມື້ຫຼັງຈາກມື້ຕໍ່ມາ.
- ຫຼີກລ້ຽງການສີດນໍ້າຢາໃນຕອນທີ່ມີອຸນຫະພູມສູງ ຕັ້ງແຕ່ເວລາ 10:00 A.M ~ 5:00 P.M.
- ການສີດນໍ້າຢາຕອນເຊົ້າ ແລະ ຕອນແລງ ຈະຊ່ວຍປ້ອງກັນການເກີດອາການໃບໃໝ້ ໄດ້ດີກ່ວາ.



ຕົວຢ່າງ: ອາການໃບໃໝ້.







(Pictures: https://www.takii.co.jp/tsk/bugs/atm/seiri/yakugai/, https://gardenshim.exblog.jp/11132759/ https://yuukurasan.com/hayake-yakugai-byougai-miwakekata/,

# ◆ ນ້ຳລະລາຍຜົງຟູ

ນ້ຳ



ຜົງຟູ (1,000 ເທື່ອ)




ນ້ຳເຜີ້ງ (1,000 ເທື່ອ)







ເຄື່ອງສີດນ້ຳຢາ ຖັງ 20 ℓ



ວິທີຈັດຕັ້ງປະຕິບັດ:

5. ຖ້າຫາກບໍ່ມີອາການ ***ໃບໃໝ້*** ຫຼັງຈາກການສີດຄັ້ງທຳອິດ, ***ປະສົມນ້ຳໃນອັດຕະສ່ວນ 1,000 ເທົ່າ*** ຕັ້ງແຕ່ຄັ້ງຕໍ່ໄປ.

6. ຄຳແນະນຳ:

- ສີດອາທິດລະ 1 ຄັ້ງ, ໃນມື້ທີ່ມີຂີ້ເຝືອຫຼາຍໃນຊ່ວງລະດູຝົນ ເພື່ອເປັນການປ້ອງກັນ.

ອັດຕາສ່ວນຂອງ ນ້ຳລະລາຍເຈືອຈາງ 2,000 ເທື່ອ

| ນ້ຳ | | ຜົງຟູ | | ນ້ຳເຜີ້ງ |
|---|---|---|---|---|
| 50ℓ | + | 25 g | + | 25 mℓ |
| 40 ℓ | + | 20 g | + | 20 mℓ |
| 30ℓ | + | 15 g | + | 15 mℓ |
| 20ℓ | + | 10 g | + | 10 mℓ |
| 15ℓ | + | 7.5 g | + | 7.5 mℓ |
| 10ℓ | + | 5 g | + | 5 mℓ |
| 1ℓ | + | 0.5 g | + | 0.5 mℓ |

ອັດຕາສ່ວນຂອງ ນ້ຳລະລາຍເຈືອຈາງ 1,000 ເທື່ອ

| ນ້ຳ | + | ຜົງຟູ | + | ນ້ຳເຜີ້ງ |
|---|---|---|---|---|
| 50ℓ | + | 50 g | + | 50 mℓ |
| 40 ℓ | + | 40 g | + | 40 mℓ |
| 30ℓ | + | 30 g | + | 30 mℓ |
| 20ℓ | + | 20 g | + | 20 mℓ |
| 15ℓ | + | 15 g | + | 15 mℓ |
| 10ℓ | + | 10 g | + | 10 mℓ |
| 1ℓ | + | 1 g | + | 1 mℓ |

# ພາກສຸດທ້າຍ

"ນ້ຳລະລາຍຜົງຟູ" ແມ່ນເຕັກນິກ ວິທີການເຮັດຢາຂ້າເຊື້ອແບບອິນຊີ.

ຈາກການທົດລອງດ້ານວິທະຍາສາດ ໄດ້ມີຫລັກຖານການຢັ້ງຢືນວ່າ ເຕັກນິກດັ່ງກ່າວໄດ້ຖືກທົດລອງ ແລະ ໄດ້ຮັບການສົ່ງເສີມຜ່ານສູນຄົ້ນຄວ້າກະສິກຳອິນຊີ ແລະ ສູນຮ່ວມມືກະສິກຳຂອງປະເທດຍີ່ປຸ່ນ.

ໃນເຕັກນິກການປູກຝັງນີ້ ໄດ້ແນະນຳການນຳໃຊ້ ໂຊດ້ຽມ ໄບຄາໂບເນດ ໃນໜ້າທີ 31 ສະບັບພາສາລາວ (ໜ້າທີ 78 ສະບັບພາສາອັງກິດ) ຂອງປື້ມ "ຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງການກະສິກຳ ແລະ ປ່າໄມ້ ວ່າດ້ວຍ ມາດຕະຖານກະສິກຳອິນຊີ ໃນ ສ.ປ.ປ ລາວ". ອີງຕາມຄຳເຕືອນປະລິມານໃນການນຳໃຊ້ ໂຊດ້ຽມ ໄບຄາໂບເນດ ທີ່ຢູ່ໃນປື້ມຄູ່ມື, ເຖິງຢ່າງໃດກໍ່ຕາມປະລິມານທີ່ເໝາະສົມ ໃນການນຳໃຊ້ຜົງຟູທີ່ດ້ານປື້ມຄູ່ມືແນະນຳ, ລ້ວນແລ້ວແຕ່ມີຄວາມປອດໄພຕໍ່ ສິ່ງແວດລ້ອມ, ມະນຸດ ແລະ ລະບົບນິເວດອື່ນໆ.

ໂຄງການພັດທະນາກະສິກຳສະອາດ ແລະ ສູນມາດຕະຖານກະສິກຳສະອາດ ຈະແນະນຳ ຄູ່ມືເຕັກນິກການກະເສດໃນເຊີງການປະຕິບັດເພີ່ມເຕີມ ໃຫ້ແກ່ຊາວກະສິກອນອິນຊີ ຂອງປະເທດລາວ.

ພວກເຮົາຫວັງວ່າຈະສາມາດ ສະໜັບສະໜູນຊາວກະສິກອນລາວ ໃນການເພີ່ມຜົນຜະລິດກະສິກຳອິນຊີ ແລະ ລາຍຮັບຂອງພວກເຂົາ.



ຂໍຂອບໃຈ ສຳລັບການຮັບຊົມ!



